**ບົດຂ່າວ**

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທົ່ວລະບົບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳປີ 2016 ແລະ ຮັບຮອງແຜນການປະຈຳປີ 2017.




ໃນວັນທີ 19-20 ມັງກອນ 2017 ນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳປີ 2016 ແລະ ຮັບຮອງແຜນການປີ 2017 ຢູ່ທີ່ສຳນັກງານໃຫຍ່ ທຄຕລ. ກອງປະຊຸມ ໄດ້ຈັດຂຶ້ນພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແລະ ມີຜູ້ເຂົ້າຮ່ວມຂັ້ນ ຄະນະອຳນວຍການ, ຄະນະສາຂາ, ຄະນະພະແນກ ແລະ ພະນັກງານທີ່ກ່ຽວຂ້ອງ ຈຳນວນ 80 ກວ່າທ່ານ.

ໃນໄລຍະ 2 ວັນດັ່ງກ່າວນີ້, ກອງປະຊຸມ ໄດ້ປະເມີນຄືນຜົນການດຳເນີນທຸລະກິດຂອງ ທຄຕລ ທົ່ວລະບົບປະຈຳປີ 2016 ເພື່ອຍົກໃຫ້ເຫັນຜົນສຳເລັດ ແລະ ສິ່ງທີ່ຕ້ອງເອົາໃຈໃສ່ປັບປຸງໃນຕໍ່ໜ້າ ເຊິ່ງກອງປະຊຸມ ໄດ້ຮັບຟັງການລາຍຈາກທຸກພະແນກການ ແລະ ສາຂາຂອງ ທຄຕລ ໃນຂອບເຂດທົ່ວປະເທດ ແລະ ໄດ້ມີການປຶກສາຫາລືໃນແຕ່ລະບັນຫາຢ່າງລະອຽດ.




ພ້ອມດຽວກັນນີ້, ກອງປະຊຸມ ກໍຍັງໄດ້ເຜີຍແຜ່ແຜນການປະຈໍາປີ 2017 ທີ່ໄດ້ຜ່ານການຮັບຮອງຈາກສະພາບໍລິຫານແລ້ວນັ້ນ ພ້ອມທັງໄດ້ວາງເປົ້າໝາຍແຜນການສູ້ຊົນແຕ່ລະດ້ານໃຫ້ບັນດາສາຂາເຊັ່ນ: ແຜນທຸລະກິດ, ແຜນການຂະຫຍາຍຜະລິດຕະພັນຕ່າງໆ. ນອກນັ້ນ ກໍ່ຍັງໄດ້ເຜີຍແຜ່ ແຜນຍຸດທະສາດ ທຄຕລ ໄລຍະ 2016-2020 ໃຫ້ສາຂາໄດ້ຮັບຮູ້ ເຂົ້າໃຈ ໂດຍພື້ນຖານ ເພື່ອນໍາເອົາເນື້ອໃນຈິດໃຈຂອງແຜນດັ່ງກ່າວໄປວາງແຜນວຽກງານຂອງຕົນແຕ່ລະໄລຍະໃຫ້ເໝາະສົມກັບທິດທາງແຜນງານລວມຂອງ ທຄຕລ.